ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 0071 /ກພສ
ນະຄອນຫຼວງວຽງຈັນ, ວັນທີ 07 ມັງກອນ 2025

# ແຈ້ງການແນະນຳ

ເຖິງ: - ຫົວໜ້າພາສີປະຈຳແຂວງ, ນະຄອນຫຼວງ
- ຫົວໜ້າດ່ານພາສີ ໃນຂອບເຂດທົ່ວປະເທດ
- ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ
- ສະມາຄົມຜູ້ບໍລິການຂົນສົ່ງ ແລະ ຈັດສົ່ງສິນຄ້າ ລະຫວ່າງປະເທດ

ເລື່ອງ: ການປະກອບຂໍ້ມູນການແຈ້ງພາສີໂດຍສັງເຂບລ່ວງໜ້າ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ ສະບັບເລກທີ 3099/ກງ, ລົງວັນທີ 30 ສິງຫາ 2024;
- ອີງຕາມ ແຈ້ງການຂອງກະຊວງການເງິນ ກ່ຽວກັບການແຈ້ງພາສີໂດຍສັງເຂບລ່ວງໜ້າກ່ອນສິນຄ້າມາເຖິງດ່ານຊາຍແດນ ສະບັບເລກທີ 2755/ກງ, ລົງວັນທີ 31 ກໍລະກົດ 2024;

ເພື່ອຮັບປະກັນໃຫ້ການປະກອບຂໍ້ມູນເຂົ້າໃນແບບພິມການແຈ້ງພາສີໂດຍສັງເຂບລ່ວງໜ້າ ໃຫ້ວ່ອງໄວ, ຖືກຕ້ອງ, ຄົບຖ້ວນ, ສາມາດກວດສອບໄດ້ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ກົມພາສີ ອອກແຈ້ງການແນະນຳ ດັ່ງນີ້:

## 1. ການປະກອບຂໍ້ມູນ

ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ຕ້ອງປະກອບຂໍ້ມູນການຂົນສົ່ງສິນຄ້າ ໃສ່ແບບຟອມການແຈ້ງພາສີໂດຍສັງເຂບລ່ວງໜ້າ ທີ່ກຳນົດໃນເອກະສານຊ້ອນທ້າຍ ກ. ຂອງແຈ້ງການແນະນຳສະບັບນີ້.

## 2. ການອະທິບາຍຂໍ້ມູນໃນແບບພິມແຈ້ງພາສີໂດຍສັງເຂບລ່ວງໜ້າ

ແບບພິມແຈ້ງພາສີໂດຍສັງເຂບລ່ວງໜ້າ ໄດ້ຖືກແບ່ງເປັນ 2 ພາກ ດັ່ງນີ້:

**ພາກທີ I ຂໍ້ມູນຂົນສົ່ງລວມ (General Transport Information):** ແມ່ນຂໍ້ມູນທົ່ວໄປຂອງການຂົນສົ່ງສິນຄ້າ, ເຄື່ອງຂອງໃນໜຶ່ງຖ້ຽວ. ຜູ້ແຈ້ງພາສີ ຕ້ອງປະກອບຂໍ້ມູນໃນພາກນີ້ ໂດຍອີງໃສ່ຂໍ້ມູນທີ່ໄດ້ຈາກ ເອກະສານ

**ຂົນສົ່ງທີ່ອອກໂດຍຜູ້ບໍລິການຂົນສົ່ງຕາມລະບຽບການກຳນົດ. ແບບພິມການແຈ້ງພາສີໂດຍສັງເຂບລ່ວງ:** ໝາຍເຖິງແບບພິມທີ່ເປັນເຈ້ຍ ແລະ ແບບພິມໃນລະບົບເອເລັກໂຕຣນິກ ທີ່ກົມພາສີກຳນົດອອກ ເພື່ອຈຸດປະສົງການແຈ້ງພາສີໂດຍສັງເຂບລ່ວງໜ້າ ຕາມແຈ້ງການແນະນຳສະບັບນີ້.

1. ລະບອບແຈ້ງພາສີ (Declaration Type): ໃຫ້ຕື່ມເລກລະຫັດລະບອບແຈ້ງພາສີ ເຊັ່ນ: IM (ແຈ້ງນຳເຂົ້າ), EX(ແຈ້ງສົ່ງອອກ) ຫຼື ລະບອບອື່ນໆ.
2. ຮູບແບບການຂົນສົ່ງ (Mode of Transport): ໃຫ້ລະບຸຮູບແບບການຂົນສົ່ງ ເຊັ່ນ: ຂົນສົ່ງທາງບົກ ດ້ວຍລົດບັນທຸກ, ຂົນສົ່ງທາງນໍ້າ ດ້ວຍເຮືອບັນທຸກ ຫຼື ຂົນສົ່ງທາງອາກາດ ດ້ວຍເຮືອບິນ.
3. ໃບຂົນສົ່ງລວມ (Master Bill): ໝາຍເຖິງໃບຂົນສົ່ງລວມ ເຊັ່ນ: Master Airway Bill, Manifest Mast Bill, Master Railway Bill, Master Bill of Lading ຫຼື Master Truck bill ເປັນຕົ້ນ. ການຂົນສົ່ງໜຶ່ງຖ້ຽວ ປະກອບດ້ວຍໃບຂົນສົ່ງລວມໜຶ່ງໃບ. ໃຫ້ລະບຸເລກທີ, ວັນທີ ແລະ ຜູ້ບໍລິການຂົນສົ່ງ (ຊື່ ແລະ ທີ່ຢູ່ບໍລິສັດຂົນສົ່ງ).
4. ພາຫະນະຂົນສົ່ງ (Mean of Transport): ໃຫ້ລະບຸລາຍລະອຽດຂອງພະຫະນະຂົນສົ່ງ (House Bill)
   - ກໍລະນີຂົນສົ່ງທາງບົກ: ໃຫ້ລະບຸປະເພດລົດບັນທຸກ ຕົວຢ່າງ: ລົດບັນທຸກແບບພ້ອງ, 12 ລໍ້, 14 ລໍ້, 16 ລໍ້, ລົດຕູ້ເຢັນ ຫຼື ອື່ນໆ; ເລກທະບຽນລົດບັນທຸກ, ປະເທດທີ່ລົດບັນທຸກດັ່ງກ່າວຂຶ້ນທະບຽນ ແລະ ຊື່ຜູ້ຂັບລົດ
   - ກໍລະນີຂົນສົ່ງທາງນໍ້າ: ໃຫ້ລະບຸປະເພດເຮືອຂົນສົ່ງ ຕົວຢ່າງ: ເຮືອບັນທຸກສິນຄ້າ ຂະໜາດ, 20 ໂຕນ, 50 ໂຕນ, 100 ໂຕນ ຫຼື ອື່ນໆ; ເລກທະບຽນເຮືອ, ປະເທດທີ່ເຮືອຂຶ້ນທະບຽນ ແລະ ຊື່ຜູ້ຂັບເຮືອ.
   - ກໍລະນີຂົນສົ່ງທາງອາກາດ: ໃຫ້ລະບຸປະເພດເຮືອບິນ ຕົວຢ່າງ: ເຮືອບິນ AirBus 320, Boeing 737 ຫຼື ອື່ນໆ; ເລກທີຖ້ຽວ ບິນ, ປະເທດທີ່ເຮືອບິນຂຶ້ນທະບຽນ ແລະ ຊື່ນັກບິນ.
   - ກໍລະນີຂົນສົ່ງທາງລາງ (ລົດໄຟ): ໃຫ້ລະບຸລາຍລະອຽດ ເຊັ່ນ: ຊື່ຂະບວນ, ເລກລະຫັດຖ້ຽວ, ປະເທດທີ່ຂຶ້ນທະບຽນລົດໄຟ ແລະ ຊື່ຜູ້ຄວບຄຸມລົດໄຟ.
5. ບ່ອນຂົນສິນຄ້າຂຶ້ນ (Place of Loading – Origin):
   - ກໍລະນີຂົນສົ່ງທາງບົກ: ໃຫ້ລະບຸຈຸດທີ່ຂົນສິນຄ້າຂຶ້ນລົດບັນທຸກ, ເມືອງ ແລະ ປະເທດ
   - ກໍລະນີຂົນສົ່ງທາງນໍ້າ: ໃຫ້ລະບຸທ່າເຮືອທີ່ຂົນສິນຄ້າຂຶ້ນ, ເມືອງ ແລະ ປະເທດ
   - ກໍລະນີຂົນສົ່ງທາງອາກາດ: ໃຫ້ລະບຸສະໜາມບິນທີ່ຂົນສິນຄ້າຂຶ້ນ, ເມືອງ ແລະ ປະເທດ
   - ກໍລະນີຂົນສົ່ງທາງລາງລົດໄຟ: ໃຫ້ລະບຸສະຖານີຕົ້ນທາງຂອງຂະບວນລົດໄຟ, ເມືອງ ແລະ ປະເທດ
6. ບ່ອນຂົນສິນຄ້າຂຶ້ນລະຫວ່າງທາງ (Place of Additional Loading): ກໍລະນີມີການຂົນສິນຄ້າບາງສ່ວນ ຫຼື ຂົນຂຶ້ນເພີ້ມ ໃນລະຫວ່າງການເດີນທາງ (ກ່ອນຮອດ ສປປ ລາວ), ໃຫ້ລະບຸຊື່ສະຖານທີ່ດັ່ງກ່າວ (ເມືອງ, ປະເທດ) ລົງໃນຫ້ອງນີ້.
7. ບ່ອນຂົນສິນຄ້າລົງ (Place of Unloading – Destination): ໃຫ້ລະບຸສະຖານທີ່ຂົນສິນຄ້າລົງທີ່ປະເທດປາຍທາງ ຊຶ່ງເປັນຈຸດສິ້ນສຸດການຂົນສົ່ງຕາມການຕົກລົງກັນຂອງຜູ້ສົ່ງ ແລະ ຜູ້ຮັບສິນຄ້າ.

**ພາກທີ II ຂໍ້ມູນຂົນສົ່ງສະເພາະ** (Specific Transport Information): ແມ່ນຂໍ້ມູນທີ່ໄດ້ຈາກໃບຂົນສົ່ງສິນຄ້າຍ່ອຍຂອງແຕ່ລະທຸລະກຳຂົນສົ່ງ (shipment). ຖ້າເປັນການຂົນສົ່ງທາງ ນໍ້າ ແລະ ຂົນສົ່ງທາງອາກາດ ຈະມີໃບຂົນສົ່ງລວມ (Master Bill) ໜຶ່ງໃບ ແລະ ມີໃບຂົນສົ່ງຍ່ອຍ (House Bill) ຫຼາຍໃບ. ໃນກໍລະ ນີເປັນການຂົນສົ່ງທາງບົກ ຖ້າບັນທຸກສິນຄ້າແບບ Full Container Load – FCL (ສິນຄ້າທັງໝົດເປັນຂອງຜູ້ດຽວ) ເອກະສານຂົນສົ່ງຈະປະກອບດ້ວຍ ໃບຂົນສົ່ງລວມ ໜຶ່ງໃບ ແລະ ໃບຂົນສົ່ງຍ່ອຍ ໜຶ່ງໃບ. ຖ້າບັນທຸກແບບ Less

Container Load – LCL (ສິນຄ້າເປັນຂອງຫຼາຍຄົນ) ເອກະສານຂົນສົ່ງຈະປະກອບດ້ວຍໃບຂົນສົ່ງລວມ ໜຶ່ງ ໃບ ແລະ ໃບຂົນສົ່ງຍ່ອຍ ຫຼາຍໃບ.

**ຫ້ອງ (ກ)** ລໍາດັບ (item): ໃຫ້ລະບຸເລກລໍາດັບຂອງໃບຂົນສົ່ງຍ່ອຍ, ຕົວຢ່າງ: ການຂົນສົ່ງມີໃບຂົນສົ່ງຍ່ອຍ 3 ຊຸດ ກໍຕ້ອງແຈ້ງຕາມລໍາດັບ 1 ຮອດ 3.

**ຫ້ອງ (ຂ) ເລກທີໃບຂົນສົ່ງຍ່ອຍ (House Bill No.)**: ໃຫ້ລະບຸເລກທີຂອງໃບຂົນສົ່ງຍ່ອຍແຕ່ລະໃບ.

**ຫ້ອງ (ຄ) ຊື່ຜູ້ສົ່ງສິນຄ້າ (Consignor)**: ໃຫ້ລະບຸຊື່, ທີ່ຢູ່, ເບີໂທ ຂອງ ຜູ້ສົ່ງສິນຄ້າ ທີ່ສົ່ງສິນຄ້າຈາກປະເທດຕົ້ນທາງມາເຖິງປາຍທາງ.

**ຫ້ອງ (ງ) ຊື່ຜູ້ຮັບສິນຄ້າ (Consignee)**: ໃຫ້ລະບຸຊື່, ທີ່ຢູ່, ເບີໂທ ຂອງຜູ້ຮັບສິນຄ້າຢູ່ປາຍທາງ

**ຫ້ອງ (ຈ) ໝວດສິນຄ້າ (Type of Goods)**: ໃຫ້ເລືອກເອົາ ຊື່ໝວດສິນຄ້າ ທີ່ສອດຄ່ອງ ຕາມລະຫັດເຄົ້າ 4 ຕົວເລກ ຕາມທີ່ລະບຸໄວ້ ໃນປຶ້ມສາລະບານສິນຄ້າ ແລະ ອັດຕາພາສີ ລະບົບເອກະພາບ (AHTN) ຕົວຢ່າງ: ສັດມີຊີວິດ, ພາຫະນະ, ເຄື່ອງໃຊ້ໄຟຟ້າ ຕາມທີ່ກໍານົດໃນເອກະສານຊ້ອນທ້າຍ ຂ.

**ຫ້ອງ (ສ) ຈໍານວນຫີບຫໍ່ (PKG)**: ໃຫ້ລະບຸຈໍານວນຫີບຫໍ່ການບັນຈຸສິນຄ້າ ຕາມທີ່ໄດ້ກໍານົດໃນໃບຂົນສົ່ງຍ່ອຍ.

**ຫ້ອງ (ຊ) ນໍ້າໜັກລວມ (Gross Weight)**: ໃຫ້ລະບຸນໍ້າໜັກລວມຂອງສິນຄ້າ ຕາມທີ່ໄດ້ກໍານົດໃນໃບຂົນສົ່ງຍ່ອຍ.

**ຫ້ອງ (ຍ) ເລກລະຫັດຕູ້ສິນຄ້າ (Container No.)**: ໃຫ້ລະບຸເລກລະຫັດຕູ້ສິນຄ້າ ກໍລະນີເປັນການບັນຈຸໃສ່ຕູ້ສິນຄ້າ.

**ຫ້ອງ (ດ) ບ່ອນຂົນສິນຄ້າລົງ (Unloading Location)**: ໃຫ້ລະບຸຊື່ຂອງສະຖານີ່ຂົນສິນຄ້າລົງ. ບາງກໍລະນີ ການຂົນສົ່ງໜຶ່ງຂະບວນອາດກໍານົດສະຖານທີ່ຂົນສິນຄ້າລົງຢູ່ຫຼາຍຈຸດ. ຕົວຢ່າງ: ການຂົນສົ່ງສິນຄ້າດ້ວຍລົດໄຟ ຊຶ່ງອາດຈະມີການຂົນສິນຄ້າລົງຫຼາຍສະຖານີ ຫຼື ສະຖານທີ່ ອື່ນ ຊຶ່ງເປັນປາຍທາງບ່ອນຂົນສົ່ງສິນຄ້າລົງ.

3. ແຈ້ງການແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

ກະຊວງການເງິນ
ກົມພາສີ

ປອ. ພູເຂົາຄໍາ ວັນນະວົງໄຊ

ເອກະສານຊ້ອນທ້າຍ ກ

ກົມພາສີ

# ໃບແຈ້ງພາສີໂດຍສັງເຂບລ່ວງໜ້າ

# Advance Cargo Declaration Form

ດ່ານພາສີ/ຫ້ອງການພາສີ:.......................... ເລກທີ................./......

ວັນທີ...........................

| I. ຂໍ້ມູນຂົນສົ່ງລວມ General Transport Information | | | |
|---|---|---|---|
| 1. ລະບອບການແຈ້ງ Declaration Type: | ☐ ການນໍາເຂົ້າ Import | ☐ ການສົ່ງອອກ Export | ☐ ອື່ນໆ Other............ |
| 2. ຮູບແບບການຂົນສົ່ງ Mode of Transport<br>☐ ທາງບົກ by Road | ☐ ທາງລາງ by Rail | ☐ ທາງອາກາດ by Air | ☐ ທາງນໍ້າ by River |
| 3.ໃບຂົນສົ່ງລວມ (Master Bill) | ເລກທີ:............... No.: | ລົງວັນທີ:............... Date | ອອກໂດຍ:......................... Issued by |
| 4. ພາຫະນະຂົນສົ່ງ Mean of Transport | ປະເພດພາຫະນະ Type ........................ | ເລກທະບຽນ/ເລກຖ້ຽວ Registration/Flight/Train No. ........................................................... | ຂຶ້ນທະບຽນທີ່ Place of Registration ................................................ |
| 5. ບ່ອນຂົນສິນຄ້າຂຶ້ນ (ຕົ້ນທາງ):<br>Place of Loading (Origin)<br>....................................... | 6. ບ່ອນຂົນສິນຄ້າຂຶ້ນ ລະຫວ່າງທາງ:<br>Place of Additional Loadings<br>...........................................<br>........................................... | 7. ບ່ອນຂົນສິນຄ້າລົງ (ປາຍທາງ)<br>Place of Unloading (Destination)<br>................................................... | |

II. ຂໍ້ມູນຂົນສົ່ງສະເພາະ (Specific Transport Information)

| ລໍາດັບ Item (ກ) | ເລກທີໃບຂົນສົ່ງຍ່ອຍ House Bill No. (ຂ) | ຊື່ຜູ້ສົ່ງສິນຄ້າ Consignor (ຄ) | ຊື່ຜູ້ຮັບສິນຄ້າ Consignee (ງ) | ໝວດສິນຄ້າ Type of Goods (ຈ) | ຈໍານວນຫີບຫໍ່ PKG (ສ) | ນໍ້າໜັກລວມ Gross Weight (KG) (ຊ) | ເລກລະຫັດຕູ້ສິນຄ້າ Container No. (ຍ) | ບ່ອນຂົນສິນຄ້າລົງ Unloding Location (ດ) |
|---|---|---|---|---|---|---|---|---|
| 1 | | | | | | | | |
| 2 | | | | | | | | |

| | | | | | | | | |
|---|---|---|---|---|---|---|---|---|
| 3 | | | | | | | | |
| 4 | | | | | | | | |
| 5 | | | | | | | | |
| 6 | | | | | | | | |
| 7 | | | | | | | | |
| 8 | | | | | | | | |
| 9 | | | | | | | | |
| 10 | | | | | | | | |
| 11 | | | | | | | | |
| 12 | | | | | | | | |
| 13 | | | | | | | | |
| 14 | | | | | | | | |
| ລວມ: | | | | | ............ | ..................... | | |

ຂ້າພະເຈົ້າ ຂໍຢືນຢັນວ່າຂໍ້ມູນທີ່ແຈ້ງລົງໃນໃບແຈ້ງພາສີໂດຍສັງເຂບນີ້ ແມ່ນຖືກຕ້ອງທຸກປະການ.

**ຜູ້ແຈ້ງພາສີໂດຍສັງເຂບລ່ວງໜ້າ** **ເຈົ້າໜ້າທີ່ພາສີ** **ຫົວໜ້າດ່ານ/ຫ້ອງການພາສີ**